American Red Cross

ສັດລ້ຽງ ແລະຄວາມປອດໄພຈາກໄພພິບັດ

ສັດລ້ຽງແມ່ນເປັນສ່ວນສຳຄັນອັນໜຶ່ງຂອງຄອບຄົວ ແລະຄວນຈະໄດ້ເອົາເຂົ້າໃນແຜນການກຽມຄວາມພ້ອມຂອງທ່ານ. ໂດຍຂໍ້ຍົກເວັ້ນເລື່ອງການບໍລິການທາງດ້ານສັດແລ້ວ, ແມ່ນບໍ່ອະນຸຍາດໃຫ້ມີສັດລ້ຽງຢູ່ໃນເຂດຫຼົບຫຼີກໄພພິບັດ ເພື່ອເຫດຜົນທາງດ້ານສຸຂະພາບ. ເພື່ອຮັບປະກັນຄວາມປອດໄພຂອງສັດລ້ຽງຂອງທ່ານ, ໃຫ້ປະຕິບັດຕາມຂັ້ນຕອນຕໍ່ໄປນີ້ຄື:

**ສ້າງແຜນການ**

ການວາງແຜນລ່ວງໜ້າແມ່ນເປັນຂັ້ນຕອນທຳອິດທີ່ຈະຮັບປະກັນວ່າສັດລ້ຽງຂອງທ່ານໄດ້ຮັບການດູແລເອົາໃຈໃສ່ໃນກໍລະນີມີໄພພິບັດ.

- ໃຫ້ຮູ້ວ່າມີໂຮງແຮມ ແລະບ້ານພັກໃດຢູ່ໃນທາງຍົກຍ້າຍອອກຂອງທ່ານທີ່ຈະຮັບເອົາທ່ານ ແລະສັດລ້ຽງຂອງທ່ານໄດ້ໃນເມື່ອມີເຫດສຸກເສີນ. ໃຫ້ໂທຈ່ອງໄວ້ລ່ວງໜ້າ ຖ້າທ່ານຮູ້ວ່າທ່ານອາດຈະຈຳເປັນຕ້ອງໄດ້ຍົກຍ້າຍອອກ. ໃຫ້ຖາມເບິ່ງວ່າສາມາດຍົກເວັ້ນເລື່ອງນະໂຍບາຍການບໍ່ໃຫ້ເອົາສັດລ້ຽງເຂົ້າໄປໄດ້ບໍ່ ໃນເມື່ອມີເຫດການສຸກເສີນ.
- ໃຫ້ຮູ້ວ່າມີໝູ່ເພື່ອນຜູ້ໃດ, ພີ່ນ້ອງຜູ້ໃດ, ບ່ອນອາໃສໃດ, ບ່ອນຫຼົບໄພສັດ ຫຼືສັດຕະວະແພດຜູ້ໃດສາມາດດູແລສັດລ້ຽງຂອງທ່ານໄດ້ໃນເມື່ອມີເຫດການສຸກເສີນ. ກຽມບັນຊີໝາຍເລກໂທລະສັບ.
- ເຖິງແມ່ນວ່າສັດຂອງທ່ານອາດຈະຢູ່ດ້ວຍກັນໄດ້ດີ, ຈົ່ງກຽມພ້ອມທີ່ຈະເອົາພວກມັນແຍກກັນຢູ່.
- ເອົາສັດລ້ຽງຂອງທ່ານເຂົ້າຮ່ວມໃນການຊ້ອມການຍົກຍ້າຍອອກ ເພື່ອວ່າພວກມັນຈະຄຸ້ນເຄີຍກັບການເຂົ້າໄປ ແລະໃນການເດີນທາງໄປກັບອັນທີ່ເອົາພວກມັນໃສ່ໄປໄດ້ຢ່າງສະຫງົບ.
- ໃຫ້ແນ່ໃຈວ່າສັດລ້ຽງຂອງທ່ານໄດ້ຮັບການສັກຢາວັກຊິນໃນປະຈຸບັນ ແລະບັນດາໝາ ແລະແມວທັງໝົດນັ້ນຕ້ອງໃສ່ປອກຄໍພ້ອມມັດເຊືອກຢ່າງຮັບປະທັນ, ມີການຢັ້ງຢືນໄວ້ຈົນຮອດປະຈຸບັນ. ທີ່ພັກຫຼົບໄພຂອງສັດລ້ຽງສ່ວນຫຼາຍຕ້ອງການໃຫ້ມີໃບຢັ້ງຢືນເລື່ອງການສັກຢາວັກຊິນໃນປະຈຸບັນເພື່ອຫຼຸດຜ່ອນການແຜ່ກະຈາຍພະຍາດ.
- ຄວນພິຈາລະນາໃຫ້ສັດຕະວະແພດໃສ່ໄມໂຄຣຊິບ (“micro-chipped”) ກັບສັດລ້ຽງຂອງທ່ານ.

**ໃຫ້ມີຊຸດເຄື່ອງມື**

ຊຸດເຄື່ອງມືທາງດ້ານໄພພິບັດຂອງທ່ານຄວນຈະມີສິ່ງຂອງທີ່ຈຳເປັນເພື່ອໃຫ້ກັບທ່ານ ແລະສະມາຊິກຄອບຄົວຂອງທ່ານທຸກໆຄົນເພື່ອໃຊ້ດູແລຕົນເອງເປັນເວລາຢ່າງໜ້ອຍ 72 ຊົ່ວໂມງ. ສຳລັບສັດລ້ຽງ, ຄວນລວມມີລາຍການຕໍ່ໄປນີ້ຄື:

- ອາຫານ
- ນ້ຳ
- ເຊືອກມັດຈູງ
- ກ່ອງໃສ່ສັດ ຫຼືຖົງຢາງປລາສຕິກ
- ປ້າຍທີ່ໃຊ້ໃນການລະບຸ
- ຮູບຂອງສັດລ້ຽງ
- ຢາປົວພະຍາດ
- ບັນທຶກທາງການແພດ
- ຊຸດອຸປະກອນຊ່ວຍເຫຼືອສັດເບື້ອງຕົ້ນ
- ພາຊະນະໃສ່ບັນຈຸ

**ພ້ອມຮັບແຈ້ງ**

- ບາງຄັ້ງການເຕືອນລ່ວງໜ້າແມ່ນບອກກ່ອນເປັນຊົ່ວໂມງ, ເປັນມື້. ຢູ່ໃນການແນະນຳອັນເບື້ອງຕົ້ນໃນເລື່ອງຂອງໄພພິບັດ, ດຳເນີນການເພື່ອປົກປ້ອງສັດລ້ຽງຂອງທ່ານ. ເອົາສັດລ້ຽງເຂົ້າມາໄວ້ຂ້າງໃນ ເພື່ອວ່າທ່ານຈະບໍ່ໄດ້ເສຍເວລາຊອກຫາພວກມັນ ຖ້າທ່ານຈຳເປັນຕ້ອງອອກໄປຢ່າງໄວ.
- ສັດລ້ຽງອາດຈະມີການປ່ຽນແປງພຶດຕິກຳຢ່າງກະທັນຫັນຫຼັງຈາກໄພພິບັດ, ເກີດມີຄວາມຮ້າຍ ຫຼືໂຫດຮ້າຍ, ດັ່ງນັ້ນ ຕ້ອງຮູ້ສະພາບຄວາມເປັນຢູ່ຂອງພວກມັນ ແລະປົກປ້ອງພວກມັນບໍ່ໃຫ້ໄດ້ຮັບອັນຕະລາຍ ເພື່ອຮັບປະກັນຄວາມປອດໄພຂອງຜູ້ອື່ນ ແລະສັດອື່ນ.
- ປຶກສາກັບສັດຕະວະແພດຂອງທ່ານ ຖ້າຍັງມີບັນຫາທາງດ້ານພຶດຕິກຳຢູ່.